# ການສົ່ງເສີມຜະລິດຊາ

## ໃນແຂວງຫຼວງພະບາງ

*ຊາປ່າເປັນໄມ້ຢືນຕົ້ນສູງ ຖ້າຢູ່ໃນທຳມະຊາດ, ໂດຍມີຊື່ວິທະຍາສາດວ່າ **Camellia sinensis var. assamica** ເຊິ່ງເປັນຊາທຳມະຊາດທີ່ພົບໃນເຂດເນີນສູງຂອງລາວ. ຊາຊ່ວຍເສີມສ້າງພູມຕ້ານທານໃຫ້ກັບຮ່າງກາຍຂອງຄົນເຮົາ, ປ້ອງກັນມະເຮັງສາມາດຊ່ວຍປ້ອງກັນຂໍ້ອັກເສບ, ສາມາດຊ່ວຍຕ້ານໄຂ້ຫວັດໃຫຍ່, ຊ່ວຍປ້ອງກັນການຕິດເຊື້ອ. ຊາຍັງເປັນສັນຍາລັກເຖິງຄວາມອຸດົມສົມບູນຂອງປ່າ. ນອກນັ້ນຍັງສາມາດປູກປະສົມປະສານກັບພືດຊະນິດອື່ນໄດ້ດີ.*

## ນິເວດວິທະຍາ ແລະ ການຄຸ້ມຄອງ

- ຊາເປັນພືດເຂດໜາວຂະຫຍາຍຕົວໄວໃນອຸຫະພູມປະມານ 22-28 ອົງສາ, ຢູ່ ສປປ ລາວ ພົບຊາໃນເຂດພູສູງທີ່ມີຄວາມສູງຈາກໜ້ານ້ຳທະເລ 200-2,000 ແມັດ.
- ຊາທີ່ມີຄຸນນະພາບດີມັກຈະພົບເຫັນ ຫຼື ປູກຢູ່ໃນລະດັບຄວາມສູງຈາກໜ້ານ້ຳທະເລປະມານ 800-1,500 ແມັດ.
- ຊາມັກເກີດຢູ່ບ່ອນຄ່ອຍຊັນ 12-30% ຂອງໜ້າດິນ.
- ລະດູການປູກເດືອນ ພຶດສະພາ ຫາ ມິຖຸນາ
- ລະດູການອອກດອກ ເດືອນຕຸລາ-ທັນວາ ແລະ ເກັບແກ່ນໃນເດືອນກຸມພາ-ມີນາ
- ຕົ້ນຊາເມື່ອມີອາຍຸ 2 ປີ ຄວນຕັດລຳຕົ້ນ ໃຫ້ສູງຈາກໜ້າດິນ 20-25 ຊມ, ຕັດງ່າຂ້າງສູງຈາກໜ້າດິນ 35-45 ຊມ.
- ຕົ້ນຊາເມື່ອມີອາຍຸ 3 ປີຂຶ້ນໄປກໍ່ສາມາດເກັບຍອດໃບຊາໄດ້, ຊ່ວງທີ່ເໝາະສົມໃນການເກັບກູ້ແມ່ນ ເດືອນ ກຸມພາ-ເມສາ.

## ຜົນການຜະລິດ:

- ໃນແຂວງຫຼວງພະບາງພົບວ່າມີເນື້ອທີ່ໃນການຜະລິດຊາ ແລະ ຊາປ່າຈຳນວນ 2,314 ເຮັກຕາ.
- ມີ  210 ຄອບຄົວ ທີ່ໄດ້ມີການວາງແຜນຄຸ້ມຄອງ ຊາທຳມະຊາດໃນເນື້ອທີ່ດິນ 79.33 ເຮັກຕາ ແລະ ຊາປູກ 132.121 ເຮັກຕາ.
- ຕົ້ນຊາປ່າແມ່ນໄດ້ຖືກຄຸ້ມຄອງເປັນຂອງລວມໝູ່ ແລະ ຄອບຄົວ, ຊຶ່ງຂຶ້ນກັບຊຸມຊົນໃນທ້ອງຖິ່ນ.
- ການເກັບກູ້ຜົນຜະລິດຊາປູກໄດ້ທັງໝົດ ປະມານ 92.760 ໂຕນ ຕໍ່ໜຶ່ງປີ ແລະ ໃນນັ້ນຊາທຳມະຊາດໄດ້ທັງໝົດ ປະມານ 14.450 ໂຕນ ຕໍ່ ໜຶ່ງປີ.

## ການຕະຫຼາດ:

- ສາມາດສ້າງລາຍຮັບໃຫ້ແກ່ຄອບຄົວໂດຍສະເລ່ຍ 9,850,000 ກີບຕໍ່ຄອບຄົວ.
- ຊາທີ່ແປຮູບເປັນຜະລິດຕະພັນຊາແຫ້ງແລ້ວ, ລາຄາ 250.000 ກີບຕໍ່ກິໂລ.
- ຊາວກະສິກອນຈະແປຮູບເອງ ຫຼື ເກັບໃບຊາສົດເພື່ອຂາຍໃຫ້ຜູ້ທີ່ແປຮູບພາຍໃນບ້ານເອງ.
- ຊາວກະສິກອນຂາຍຊາທີ່ແປຮູບໃຫ້ພໍ່ຄ້າຄົນຈີນ ຫຼື ນັກທ່ອງທ່ຽວ.

## ໂອກາດ:

- ຕະຫຼາດຊາມີຄວາມສົນໃຈຊາຂອງ ສປປ ລາວເນື່ອງຈາກເປັນແຫຼ່ງຜະລິດຊາແຫຼ່ງໃໝ່, ຜະລິດຕະພັນຊາອິນຊີ ແລະ ເປັນຊາປ່າທຳມະຊາດ.
- ຄວາມຕ້ອງການຂອງຕະຫຼາດພາຍໃນເພີ່ມຂຶ້ນ ແລະ ມີຫຼາກຫຼາຍຜະລິດຕະພັນຊາ. ຕະຫຼາດພາຍໃນມີແນວໂນ້ມການຂະຫຍາຍຕົວ ແລະ ມີຜົນກຳໄລສູງ.
- ຂະແໜງຊາຂອງ ສປປ ລາວ ຍັງມີຂະໜາດນ້ອຍ ແລະ ການພັດທະນາຂະແໜງຊາຫາກໍ່ລິເລີ່ມຍັງພົບຂໍ້ຫຍຸ້ງຍາກທາງດ້ານການປຸງແຕ່ງ ແລະ ການຕະຫຼາດ.









Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra

Swiss Agency for Development
and Cooperation SDC

NAFRI

TABI
The Agro-Biodiversity Initiative (TABI)